ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ພັກປະຊາຊົນ ປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ 14 / ກມສພ
ວຽງຈັນ, ວັນທີ 21 ທັນວາ 2001

**ຄໍາສັ່ງ ແນະນໍາ**
**ກ່ຽວກັບ ການພັດທະນາ ແລະການນໍາໃຊ້**
**ເຕັກໂນໂລຢີ ການຂ່າວສານ**
**ຢູ່ໃນ ສປປ ລາວ.**

ໃນປັດຈຸບັນນີ້ ເຕັກໂນໂລຢີໂທລະຄົມມະນາຄົມປະເພດຕ່າງໆ ເຊັ່ນ: ໂທລະສັບມີສາຍ, ໂທລະສັບເຄື່ອນທີ່, ລະບົບສາຍສົ່ງສັນຍານໄມກະໂຣເວບ, ລະບົບສື່ສານດາວທຽມ ແລະ ສາຍໃຍແສງ, ເຕັກໂນໂລຢີຄອມພິວເຕີ, ຮາດແວ, ຊອບແວ ແລະຖານຂໍ້ມູນ ລວມໄປເຖິງລະບົບສື່ສານມວນຊົນ ເຊັ່ນ ວິທະຍຸກະຈາຍສຽງ ແລະໂທລະພາບ ໄດ້ຖືກຄົ້ນຄວ້າ ແລະພັດທະນາເອົາມາລວມເຂົ້າເປັນ ລະບົບ ເຕັກໂນໂລຢີການຂ່າວສານ ລະບົບດຽວ ທີ່ສາມາດສົ່ງ ແລະຮັບໄດ້ທັງຂໍ້ມູນ, ສຽງ ແລະ ຮູບພາບ (Information and Communication Technology "ICT"). ເຕັກໂນໂລຢີການຂ່າວສານ ໄດ້ກາຍເປັນປັດໃຈອັນສໍາຄັນຢ່າງຍິ່ງ ໃນການບໍລິຫານງານຂອງລັດຖະບານ ແລະ ວຽກງານການປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທໍາ, ການຄ້າ, ການບໍລິການ, ການພົວພັນຮ່ວມມືກັບສາກົນ ແລະ ອື່ນໆ ຢູ່ໃນຫລາຍປະເທດ.

ຢູ່ໃນ ສປປ ລາວ ຂອງພວກເຮົາ ການພັດທະນາ ແລະການນໍາໃຊ້ເຕັກໂນໂລຢີການຂ່າວສານ ແມ່ນຍັງຢູ່ໃນໄລຍະເລີ່ມຕົ້ນ ທຽບໃສ່ບັນດາປະເທດໃນກຸ່ມອາຊຽນ ກໍ່ຄືບັນດາປະເທດທີ່ເຂົາໄດ້ພັດທະນາແລ້ວ. ຈໍານວນໂທລະສັບ ຕໍ່ປະຊາກອນ ຍັງມີຫນ້ອຍ ປະມານ 0.7 ຫນ່ວຍ ຕໍ່ 100 ຄົນ ແລະ ຜູ້ຮູ້ນໍາໃຊ້ຄອມພິວເຕີ ກໍ່ຍັງມີຫນ້ອຍ ແລະຈໍາກັດຢູ່ແຕ່ໃນບັນດາຕົວເມືອງໃຫຍ່. ການກໍ່ສ້າງຕາຫນ່າງໂທລະຄົມມະນາຄົມທັນສະໄຫມ ບໍ່ທັນໄປເຖິງຫມົດທຸກເມືອງ ແລະທຸກບ້ານ ພາຍໃນປະເທດ, ຈໍານວນຊ່ອງໂທລະສັບລະຫວ່າງແຂວງ ບໍ່ທັນພຽງພໍກັບຄວາມຕ້ອງການຊົມ

ໃຊ້. ລະບົບຕາໜ່າງສາຍໂທລະສັບ ໃນຕົວເມືອງ ບໍ່ທັນພຽງພໍ ແລະ ຍັງຈຳກັດທາງດ້ານຄວາມສາມາດໃນການນຳສົ່ງສັນຍານ ໂດຍສະເພາະໃນເມື່ອນຳໃຊ້ເຂົ້າໃນການສື່ສານກັບລະບົບອິນເຕີແນັດ. ການກໍ່ສ້າງ ແລະການນຳໃຊ້ ຕາໜ່າງເຄືອຄ່າຍຄອມພິວເຕີ (LAN, MAN, WAN) ແລະລະບົບອິນເຕີແນັດ (Internet) ຊຶ່ງເປັນສ່ວນໜຶ່ງຂອງ ເຕັກໂນໂລຢີໂທລະຄົມມະນາຄົມ ບໍ່ທັນເປັນລະບົບລວມສູນ ແລະທົ່ວເຖິງ, ບໍ່ທັນໄດ້ນຳໃຊ້ ລະຫັດອິນເຕີແນັດສູງສຸດ ຂອງ ປະເທດໃນການແລກປ່ຽນ ຂໍ້ມູນຂ່າວສານ ແລະການລົງແວບໄຊຕ່າງໆ. ນອກຈາກນີ້ ບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ທາງດ້ານວິຊາການເຕັກໂນໂລຢີການຂ່າວສານ ຍັງມີ ໜ້ອຍ.

ເພື່ອສືບຕໍ່ຊຸກຍູ້ສົ່ງເສີມ ການພັດທະນາ ແລະນຳໃຊ້ເຕັກໂນໂລຢີ ການຂ່າວສານ ຢູ່ ສປປ ລາວ, ກົມການເມືອງສູນກາງພັກ ອອກຄຳສັ່ງແນະນຳ ກ່ຽວກັບການພັດທະນາ ແລະການນຳໃຊ້ເຕັກໂນໂລຢີການສື່ສານ ດັ່ງນີ້:

★ <u>ກ່ຽວກັບຈຸດໝາຍສູ້ຊົນແນ່ນ ແນ່ໃສ່ເຮັດໃຫ້:</u>

- ເຕັກໂນໂລຢີການຂ່າວສານ ໄດ້ຮັບການນຳໃຊ້ຢ່າງກວ້າງຂວາງ ແລະແຜ່ຫລາຍ ໃນທຸກຂົງເຂດ, ກາຍເປັນປັດໃຈ ຕົ້ນຕໍ ອັນໜຶ່ງ ໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

- ຂະຫຍາຍຕາໜ່າງການໂທລະຄົມມະນາຄົມແຫ່ງຊາດ ໃຫ້ມີຄວາມສາມາດ ໃນການບັນຈຸ ສັນຍານຫລາຍ, ມີຄວາມໄວສູງ, ຄຸນນະພາບດີ, ລາຄາຖືກ ໃນຂອບເຂດທົ່ວປະເທດ; ເຮັດໃຫ້ ຈຳນວນ ຜູ້ນຳໃຊ້ອິນເຕີແນັດ ຂອງປະເທດເຮົາ ເພີ່ມຂຶ້ນ ຢູ່ໃນລະດັບ ຫລາຍກວ່າປະຈຸບັນ.

- ປະກອບສ່ວນເຂົ້າໃນການປົດປ່ອຍ ແລະຂະຫຍາຍກຳລັງແຮງບົ່ມຊ້ອນດ້ານວັດຖຸ ແລະຈິດໃຈ ຂອງທົ່ວທັງຊາດ; ເປັນກຳລັງດັນ ກະຕຸກຊຸກຍູ້ພາລະກິດປ່ຽນແປງໃໝ່, ເຮັດໃຫ້ເສດຖະກິດ ມີການຂະຫຍາຍຕົວໄວ ແລະໝັ້ນນື້ບັບທັນສະໄໝ; ເພີ່ມທະວີຄວາມອາດສາມາດແກ່ງແຍ້ງແຂ່ງຂັນ ໃຫ້ແກ່ບັນດາວິສາຫະກິດ ຂອງປະເທດເຮົາ, ພ້ອມທັງ ຊ່ວຍໜູນ ໃຫ້ແກ່ການເປີດກວ້າງ ການພົວພັນຮ່ວມມື ກັບພາຍນອກ, ຍົກສູງ ຄຸນນະພາບຊີວິດການເປັນຢູ່ຂອງ ປະຊາຊົນ; ເປັນການສ້າງປະກົນປັດໃຈ ອັນສຳຄັນ ໃຫ້ແກ່ການກຽມຫັນປະເທດ ເປັນອຸດສາຫາກຳ ແລະທັນສະໄໝ.

- ຮັບປະກັນ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກໍ່ຄື ການປົກປັກຮັກສາ ແລະຂະຫຍາຍ ວັດທະນາທຳອັນດີງາມ ຂອງຊາດ.

*<u>ກ່ຽວກັບແຜນນະໂຍບາຍ ແມ່ນຕ້ອງຮັບປະກັນ ໃຫ້:</u>

1/- ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ ເປັນໜ້າທີ່ບູລິມະສິດ ໃນຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ, ທັງເປັນ ພາຫານະອັນຕົ້ນຕໍ ໃນການເລັ່ງລັດພັດທະນາ ແລະຂະຫຍາຍອຸດສະຫາກຳ, ລົດຜ່ອນໄລຍະຫ່າງ ລະຫວ່າງ ປະເທດເຮົາ ກັບປະເທດທີ່ມີການພັດທະນາແລ້ວ.

2/- ທຸກຂົງເຂດວຽກງານ, ເສດຖະກິດ, ວັດທະນາທຳ, ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລ້ວນແຕ່ຕ້ອງ ໄດ້ນຳໃຊ້ ເຕັກໂນໂລຢີການຂ່າວສານ.

3/- ສ້າງເງື່ອນໄຂອຳນວຍ ແກ່ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີ ການຂ່າວສານ ເຂົ້າໃນການພັດທະນາ ຕາໜ່າງໂທລະຄົມມະນາຄົມແຫ່ງຊາດ ເຊິ່ງແມ່ນພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ອັນສຳຄັນ ເພື່ອຮັບປະກັນໃຫ້ ລະບົບຕາໜ່າງ ດັ່ງກ່າວ ມີຄວາມໄວ ແຫ່ງການສົ່ງສັບຍານ ຂໍ້ມູນ ຂ່າວສານ ສູງ, ມີຄຸນນະພາບດີ ແລະ ລາຄາຖືກ.

4/- ສ້າງ ແລະຂະຫຍາຍແຫລ່ງຊັບພະຍາກອນມະນຸດ ໃຫ້ແກ່ເຕັກໂນໂລຢີການຂ່າວສານ ແມ່ນປັດໃຈຕັດສິນຕົ້ນຕໍ ສຳລັບການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ.

*<u>ກ່ຽວກັບທິດທາງໜ້າທີ່ ແຫ່ງການນຳໃຊ້ ແລະ ຂະຫຍາຍ ເຕັກໂນໂລຢີການຂ່າວສານ</u> ຢູ່ ສປປລາວ:

*1/- ນຳໃຊ້ເຕັກໂນໂລຢີການຂ່າວສານ ໃນທົ່ວສັງຄົມ ໃຫ້ກວ້າງຂວາງ ແລະ ມີປະສິດທິຜົນ.*

ບັນດາອົງການຈັດຕັ້ງ ຂອງພັກ, ລັດ, ບັນດາອົງການຈັດຕັ້ງ ການເມືອງ-ສັງຄົມ ຕ້ອງເອົາໃຈໃສ່ ຕໍ່ການນຳໃຊ້ ເຕັກໂນໂລຢີການຂ່າວສານ ເຂົ້າໃນການເຄື່ອນໄຫວຕ່າງໆ ຂອງຕົນ ຕາມທິດ ຮັບປະກັນການປະຢັດມັດທະຍັດ, ມີຄວາມແທດເຫມາະ ແລະມີຜົນປະໂຫຍດຕົວຈິງ ທັງໃນສະເພາະໜ້າ ແລະ ຍາວນານ.

ກໍ ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ ເປັນສ່ວນປະກອບອັນສຳຄັນໃນການປັບປຸງລະບອບການຄຸ້ມຄອງ ບໍລິຫານ, ເປັນ ວຽກປົກກະຕິ ເປັນປະຈຳ ຂອງບັນດາການຈັດຕັ້ງຂອງພັກ ແລະລັດ ແນໃສ່ເພີ່ມທະວີ ຄວາມສາມາດ ໃນການຄຸ້ມຄອງບໍລິຫານ, ກໍຄືການຍົກສູງ ປະສິດທິຜົນ ແລະ ຄຸນນະພາບ ຂອງວຽກງານ.

ຄະນະພັກ ຂັ້ນຕ່າງໆ ຕ້ອງຊີ້ນຳການກໍ່ສ້າງບັນດາລະບົບຕາໜ່າງ ເຄືອຄ່າຍ ການສື່ສານ ອັນຈຳເປັນ ໃຫ້ວ່ອງໄວທັນການ ເພື່ອຮັບໃຊ້ສາທາລະນະປະໂຫຽດ, ຮັບໃຊ້ການຊີ້ນຳນຳ

ພາ ຂອງພັກ ແລະ ການຄຸ້ມຄອງ ບໍລິຫານ ຂອງລັດ. ຕັ້ງໜ້າ ສ້າງເຄືອຄ່າຍ ຂໍ້ມູນຂ່າວສານ ຂອງສູນກາງພັກ ແລະລັດຖະບານ ໃຫ້ສຳເລັດໂດຍໄວ, ພ້ອມທັງມີການຍົກລະດັບ ແລະຮັບປະກັນໃຫ້ ການນຳໃຊ້ ເຄືອຄ່າຍເຫລົ່ານັ້ນ ຢ່າງມີປະສິດທິພົນ.

ສຸມການພັດທະນາການບໍລິການດ້ານເອເລັກໂຕຣນິກ ໃນຂົງເຂດວຽກງານການເງິນ (ຂະແໜງພາສີອາກອນ, ຄັງເງິນ, ການກວດກາການເງິນ,...), ທະນາຄານ, ການບິນ, ການຄ້າ, ການບໍລິການສາທາລະນະປະໂຫຍດ (ການສຶກສາ, ການຮັກສາ ແລະປິ່ນປົວສຸຂະພາບ, ວຽກງານຫໍສະມຸດ, ແລະອື່ນໆ); ຮັບປະກັນ ບັນດາເງື່ອນໄຂ ອັນຈຳເປັນ ທີ່ເໝາະສົມ ສຳລັບ ການເຂົ້າຮ່ວມ ໃນການເປີດກວ້າງ ການພົວພັນ ຮ່ວມມື ເສດຖະກິດ ກັບ ພາຍນອກ.

ຮີບຮ້ອນ ສ້າງໂຄງການ ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ ເຂົ້າໃນຂົງເຂດວຽກງານ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອປະກອບສ່ວນ ສ້າງປະກົດປັດໃຈ ສຳລັບ ການທັນກຳລັງປະກອບອາວຸດ ໃຫ້ມີລະບຽບ ແບບແຜນ, ທັນສະໄໝ ເປັນກ້າວໆ; ສ້າງລະບົບບັນຊາ ທີ່ທັນສະໄໝ, ລັ່ງລຽນວ່ອງໄວ, ທັງສາມາດ ນຳໃຊ້ອາວຸດຍຸດໂທປະກອນ, ວິທີການສູ້ຮົບ ທີ່ກ້າວໜ້າ ແນໃສ່ຮັບປະກັນ ການກະກຽມພ້ອມສູ້ຮົບ, ເປັນເຈົ້າການ ປົກປັກຮັກສາປະເທດຊາດ ໃນເງື່ອນໄຂ ຂອງສົງຄາມການສື່ສານ ທີ່ທັນສະໄໝ.

ບັນດາອົງການສື່ມວນຊົນ, ໜັງສືພິມ, ອົງການຈຳໜ່າຍສິ່ງພິມຕ່າງໆ ແລະ ບັນດາອົງການ ທີ່ເຮັດການບໍລິການ ດ້ານຂ່າວສານຂໍ້ມູນ ຕ້ອງເອົາໃຈໃສ່ ຂະຫຍາຍບັນດາ ຮູບການສື່ສານ ທາງດ້ານເອເລັກໂຕຣນິກ, ມີການໂຄສະນາເຜີຍແຜ່ ແລະ ອົບຮົມ ກ່ຽວກັບຄວາມຮູ້ທາງດ້ານເອເລັກໂຕຣນິກ ຕໍ່ທົ່ວສັງຄົມ ໃຫ້ເປັນປະຈຳ, ປົກກະຕິ ແລະກວ້າງຂວາງ.

ບັນດາວິສາຫະກິດ ຕ້ອງເອົາໃຈໃສ່ ຕໍ່ການລົງທຶນ ໃສ່ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ, ນຳໃຊ້ການຄ້າເອເລັກໂຕຣນິກ, ພ້ອມທັງ ຖືສິ່ງເຫລົ່ານີ້ ເປັນວິທີການພື້ນຖານ ອັນໜຶ່ງ ໃນການປັບປຸງປ່ຽນແປງການຄຸ້ມຄອງບໍລິຫານ, ປ່ຽນກ່າຍເຕັກໂນໂລຢີ, ກໍ່ຄືປັບປຸງຄືນ ໂຄງປະກອບການຜະລິດ, ເປີດກວ້າງຕະຫລາດ ແລະ ຍົກສູງຄວາມສາມາດ ໃນການແກ່ງແຍ້ງແຂ່ງຂັນ ຂອງວິສາຫະກິດ.

**2/- ສ້າງເງື່ອນໄຂອຳນວຍ ໃຫ້ແກ່ການ ນຳໃຊ້ ແລະ ຂະຫຍາຍ ເຕັກໂນໂລຢີການຂ່າວສານ ໄປພ້ອມກັບການ ເພີ່ມທະວີ ມາດຕະການກວດກາ ການນຳໃຊ້ ເຕັກໂນໂລຢີ ໃຫ້ແໜ້ນແລະແທດເຖິງ ເພື່ອຮັບປະກັນ ໃຫ້ການນຳໃຊ້ເປັນໄປ ຢ່າງມີປະສິດທິພົນ.**

ຖື ພື້ນຖານໂຄງລ່າງ ດ້ານໂທລະຄົມມະນາຄົມສື່ສານ ເປັນພື້ນຖານໂຄງລ່າງ ດ້ານເສດຖະກິດ-ສັງຄົມ ທີ່ສຳຄັນ ແລະມີບູລິມະສິດ ໃນການໃຊ້ທຶນ ແກ່ການນຳໃຊ້ ແລະຂະຫຍາຍເຕັກໂນໂລຢີການຂ່າວສານ; ໃຫ້ ບູລິມະສິດ ໃນການໃຊ້ທຶນຊ່ວຍເຫຼືອ ODA ແກ່ການນຳໃຊ້

ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ. ຮັບປະກັນ ບັນດາເງື່ອນໄຂອັນຈຳເປັນ ໃຫ້ບັນດາ ໂຄງການ ນຳໃຊ້ ແລະ ຂະຫຍາຍ ເຕັກໂນໂລຢີການຂ່າວສານ ທີ່ໄດ້ກວດ ຜ່ານແລ້ວ ສາມາດ ດຳເນີນໄປໄດ້ ຖືກຕາມ ຈັງຫວະ ແລະແຜນວຽກຕ່າງໆ ທີ່ໄດ້ກຳນົດໄວ້.

ມີຄວາມເອົາໃຈໃສ່ ແລະສົ່ງເສີມ ການນຳໃຊ້ ການບໍລິການ ແລະຜະລິດຕະພັນດ້ານ ເຕັກໂນໂລຢີການຂ່າວສານ ຂອງພາຍໃນປະເທດ.

ກຳນົດ ມາດຖານ ຂອງຂໍ້ມູນຂ່າວສານ ແລະລະບົບການຂ່າວສານ ໃນແຕ່ລະຂົງເຂດ. ຮັບປະກັນ ເງື່ອນໄຂ ອັນຈຳເປັນຕ່າງໆ ສຳລັບ ການແລກປ່ຽນ ແລະນຳໃຊ້ ພື້ນຖານຂໍ້ມູນ ຂ່າວສານ ລວມ, ກໍ່ຄື ໃນການແລກປ່ຽນ ແລະນຳໃຊ້ ລະບົບ ຂໍ້ມູນຂ່າວສານ ຢູ່ພາຍໃນ ແລະ ກັບຕ່າງປະເທດ.

ວາງ ລະບອບລະບຽບການ ອັນລະອຽດໄປພ້ອມກັບ ມີມາດຕະການ ອັນຕັ້ງໜ້າ ໃນ ການຮັບປະກັນ ຄວາມປອດໄພ ໃນການສື່ສານ, ເປັນຕົ້ນ ແມ່ນ ໃນຂົງເຂດ ວຽກງານການ ຄຸ້ມຄອງລັດ ແລະ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

ສົ່ງເສີມ ແລະຊ່ວຍໜູນການຮ່ຳຮຽນ ແລະຍົກລະດັບ ພາສາຕ່າງປະເທດ ໃນໝູ່ ປະຊາຊົນຈຳນວນໜຶ່ງ, ເປັນຕົ້ນແມ່ນ ໃນກຸ່ມແກວຊາວໜຸ່ມ, ເຍົາວະຊົນ. ມີມາດຕະການ ແລະ ວິທີການ ຊ່ວຍໜູນ ເພື່ອໃຫ້ຄົນລາວ ທັງຫລາຍ ສາມາດ ນຳໃຊ້ ເຕັກໂນໂລຢີການຂ່າວສານ ເປັນພາສາລາວ ຢ່າງສະດວກ.

ສ້າງມາດຕະຖານ ຂອງຂະແໜງວຽກ, ກໍ່ຄື ຂອງແຕ່ລະໜ້າວຽກ ດ້ານເຕັກໂນໂລຢີ ການຂ່າວສານໃຫ້ລະອຽດ, ພ້ອມທັງ ມີການກຳນົດ ລະບອບເງິນເດືອນ ແລະການປະຕິບັດ ນະໂຍບາຍ ອັນຈຳເປັນ ໃຫ້ແກ່ກຸ່ມແກວພະນັກງານ ທີ່ເຮັດວຽກ ໃນຂົງເຂດນີ້. ໃຫ້ຄວາມສຳຄັນ ແກ່ການສ້າງ ແລະປັບປຸງ ລະບອບ ລະບຽບ, ກົດໝາຍ ກ່ຽວກັບ ຊັບສິນທາງປັນຍາ.

### ໓/- ເອົາໃຈໃສ່ຕໍ່ການສ້າງ ແລະນຳໃຊ້ແຫລ່ງຊັບພະຍາກອນມະນຸດ ໃຫ້ເໝາະສົມ.

ເພີ່ມຈຳນວນ ແລະຍົກລະດັບຄຸນນະພາບ ຂອງກຸ່ມແກວພະນັກງານ ດ້ານເຕັກໂນໂລຢີ ການຂ່າວສານ, ເອົາໃຈໃສ່ສ້າງໃຫ້ມີ ກຸ່ມແກວພະນັກງານ ທີ່ມີລະດັບລົງເລິກ ວິຊາການ ດ້ານ ເຕັກໂນໂລຢີການຂ່າວສານ.

ໃນສະເພາະໜ້ານີ້, ຕ້ອງຈັດຕັ້ງການສ້າງ, ເຝິກອົບຮົມ ແກ່ ຜູ້ທີ່ຮຽນຈົບມະຫາ ວິທະຍາໄລ, ຈົບຊັ້ນສູງ ໃຫ້ມີຄວາມຮູ້ ອັນຈຳເປັນ ດ້ານເຕັກໂນໂລຢີ ການຂ່າວສານ ດ້ວຍ ຮູບການ ອັນເໝາະສົມຕ່າງໆ.

ຊຸກຍູ້ ສົ່ງເສີມ ການນຳໃຊ້ເຕັກໂນໂລຢີຂ່າວສານ ໃນຂະແໜງການສຶກສາ ຢ່າງ ແຂງແຮງ. ເອົາໃຈໃສ່ ຄົ້ນຄວ້າ ແລະຈັດຕັ້ງຮູບການສຶກສາທາງໄກ ເພື່ອຮັບໃຊ້ການ

ຄົ້ນຄວ້າຮ່ຳຮຽນ ຍົກລະດັບ ຂອງທົ່ວສັງຄົມ. ມີການລົງທຶນອັນເຫມາະສົມ ເພື່ອຂະຫຍາຍລະບົບເຄືອຄ່າຍ ຄອມພິວເຕີ ໃນສະຖາບັນການສຶກສາ ຕົ້ນຕໍ ຂອງປະເທດ. ສ້າງເງື່ອນໄຂອຳນວຍ ແລະສົ່ງເສີມ ໃຫ້ສະຖາບັນການສຶກສາຕ່າງໆ ສາມາດເຊື່ອມຕໍ່ເຂົ້າກັບ ລະບົບອິນເຕີແນັດ.

ປຸກລະດົມ ໃຫ້ທົ່ວສັງຄົມເຂົ້າຮ່ວມ ໃນການສ້າງຊັບພະຍາກອນມະນຸດ ດ້ານເຕັກໂນໂລຢີການຂ່າວສານ ຢ່າງແຂງແຮງ, ສົ່ງເສີມ ໃຫ້ບັນດາການຈັດຕັ້ງ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ເຂົ້າໃນການສ້າງ ແລະນຳໃຊ້ ແຫລ່ງຊັບພະຍາກອນມະນຸດ ດ້ານເຕັກໂນໂລຢີການຂ່າວສານ ຂອງລາວ.

ສ້າງ ແລະປະຕິບັດ ໂຄງການ ສົ່ງຄູອາຈານ ໄປບຳລຸງຍົກລະດັບ ຢູ່ພາຍໃນ ແລະຕ່າງປະເທດ ເພື່ອປັບປຸງ ຍົກສູງຄຸນນະພາບ ຂອງການສິດສອນ; ສ້າງເງື່ອນໄຂ ໃຫ້ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ດ້ານເຕັກໂນໂລຢີການຂ່າວສານ ໄດ້ໄປຮ່ຳຮຽນ ຍົກລະດັບ ຢູ່ ຕ່າງປະເທດ; ມີນະໂຍບາຍອັນເຫມາະສົມ ຕໍ່ຜູ້ທີ່ມີພອນສະຫວັນ, ຜູ້ມີຄວາມຮູ້ເກັ່ງ ດ້ານເຕັກໂນໂລຢີການຂ່າວສານ, ກໍ່ຄື ຜູ້ທຸກຍາກ, ດ້ອຍໂອກາດ ເພື່ອໃຫ້ເຂົາເຈົ້າ ສາມາດ ໄດ້ຮ່ຳຮຽນຍົກລະດັບ ແລະ ປະກອບສ່ວນ ເຂົ້າໃນການນຳໃຊ້ ແລະພັດທະນາເຕັກໂນໂລຢີການຂ່າວສານ ຢູ່ປະເທດເຮົາ.

**4/- ຊຸກຍູ້ການສ້າງຕາຫນ່າງສື່ສານໂທລະຄົມມະນາຄົມແຫ່ງຊາດ ໃຫ້ທັນສະໄຫມ.**

ສືບຕໍ່ລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ຂອງລະບົບການສື່ສານແຫ່ງຊາດ ເຊິ່ງກວມເອົາລະບົບໂທລະຄົມມະນາຄົມ ແລະອິນເຕີແນັດ ເພື່ອສາມາດຕອບສະຫນອງ ຄວາມຮຽກຮ້ອງຕ້ອງການສະເພາະຫນ້າ ແລະຍາວນານ.

ການຂະຫຍາຍ ແລະຄຸ້ມຄອງ ລະບົບໂທລະຄົມມະນາຄົມ ແລະອິນເຕີແນັດ ຕ້ອງຮັບປະກັນ ໃຫ້ແກ່ການກະຕຸກຊຸກຍູ້ ການນຳໃຊ້ ແລະ ຂະຫຍາຍເຕັກໂນໂລຢີການຂ່າວສານ ໃນທຸກຂົງເຂດວຽກງານ ຂອງລັດ ແລະສັງຄົມ, ແຕ່ ພ້ອມກັນນີ້, ກໍ່ຕ້ອງມີມາດຕະການ ອັນຮອບດ້ານ ຄົບຊຸດ ເພື່ອສະກັດກັ້ນ ບັນດາການກະທຳ ທີ່ຫວັງສວຍໃຊ້ ສິ່ງເຫລົ່ານີ້ ເພື່ອນ້າງເພທຳລາຍ ຄວາມສະຫງົບປອດໄພ ແລະ ກໍ່ຄື ສ້າງຄວາມເສື່ອມເສຍ ໃຫ້ແກ່ວັດທະນາທຳ, ຂະນົບທຳນຽມ ອັນດີງາມ ຂອງຊາດ.

ມີນະໂຍບາຍອັນເຫມາະສົມ ໃນການສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດ ໄດ້ເຂົ້າຮ່ວມ ແລະ ມີການແກ່ງແຍ້ງແຂ່ງຂັນອັນຕັ້ງຫນ້າ ໃນການສະຫນອງການບໍລິການ ດ້ານໂທລະຄົມມະນາຄົມ ແລະອິນເຕີແນັດ. ສ້າງເງື່ອນໄຂອຳນວຍ ໃຫ້ປະຊາຊົນ ໄດ້ນຳໃຊ້ການບໍລິການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີແນັດ ທີ່ມີຄຸນນະພາບ, ລາຄາຖືກ; ມີນະໂຍບາຍ ອັນເຫມາະສົມ ໃນການ

ຫລຸດຜ່ອນ ຄ່າບໍລິການ ແກ່ບັນດາອົງການພັກ, ລັດ ແລະ ທົວໜ່ວຍການຈັດຕັ້ງ ໃນຂົງເຂດການສຶກສາ ແລະ ຄົ້ນຄວ້າວິທະຍາສາດ.

5/- ປັບປຸງ ການຄຸ້ມຄອງລັດ ຕໍ່ກັບຂົງເຂດວຽກງານ ເຕັກໂນໂລຢີການຂ່າວສານ.

ລັດຖະບານ ຮີບຮ້ອນປັບປຸງ ບັນດາອົງການຄຸ້ມຄອງ ດ້ານໂທລະຄົມມະນາຄົມ ແລະ ເຕັກໂນໂລຢີການຂ່າວສານ ເພື່ອຮັບປະກັນໃຫ້ມີການຄຸ້ມຄອງ ຂົງເຂດວຽກງານນີ້ ຢ່າງມີຄວາມເອກະພາບ ແລະແທດເໝາະ.

ໃນສະເພາະໜ້ານີ້, ບັນດາອົງການພັກ, ລັດ ຂັ້ນສູງກາງ, ຂັ້ນແຂວງ, ກຳແພງນະຄອນ ແລະເຂດພິເສດ ຄວນມີການແຕ່ງຕັ້ງ ພະນັກງານ ໃນຄະນະນຳ ຂອງຕົນ ເພື່ອຮັບຜິດຊອບວຽກງານ ເຕັກໂນໂລຢີການຂ່າວສານ.

ສ້າງ ແລະປະກາດໃຊ້ລະບົບເອກະສານນິຕິກຳ ອັນຈຳເປັນຕ່າງໆ ກ່ຽວກັບ ການນຳໃຊ້, ຂະຫຍາຍ ແລະຄຸ້ມຄອງ ເຕັກໂນໂລຢີການຂ່າວສານ ຕາມທິດຮັບປະກັນ ໃຫ້ ຄວາມສາມາດແຫ່ງການຄຸ້ມຄອງ ໄປທັນກັບ ຈັ່ງຫວະ ຂອງການຂະຫຍາຍຕົວ ຂອງວຽກງານ ເຕັກໂນໂລຢີການຂ່າວສານ; ເຮັດໃຫ້ ການລົງທຶນ ໃສ່ວຽກງານນີ້ ເປັນໄປ ຢ່າງມີປະສິດທິຜົນ, ມີໝາກຜົນຕົວຈິງ, ປັດສະຈາກການຟຸ່ມເຟືອຍ, ຮົ່ວໄຫລ ແລະການສວຍໂອກາດຕ່າງໆ.

*<u>ກ່ຽວກັບການຈັດຕັ້ງປະຕິບັດ</u>

ລັດຖະບານ ຕ້ອງຊີ້ນຳການຈັດຕັ້ງພັນຂະຫຍາຍ ເນື້ອໃນຈິດໃຈ ຂອງຄຳສັ່ງແນະນຳສະບັບນີ້ ໃຫ້ເປັນ ອັນລະອຽດ, ໂດຍສະເພາະແມ່ນ ຕ້ອງສ້າງ ໃຫ້ມີແຜນແມ່ບົດ ແຫ່ງການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ ຢູ່ປະເທດເຮົາ ໃນໄລຍະ 5 ປີ, 10 ປີ, 20 ປີ ຕໍ່ໜ້າໃຫ້ໄດ້; ມີລະບອບການຕິດຕາມ, ກວດກາ ແລະຊຸກຍູ້ ການຈັດຕັ້ງພັນຂະຫຍາຍ ແຜນ ທີ່ໄດ້ວາງອອກ ໃຫ້ແທດເຖິງ ແລະເປັນປະຈຳປົກກະຕິ; ດຳເນີນການປັບປຸງ ລະບົບການຈັດຕັ້ງ ຄຸ້ມຄອງລັດ ຕໍ່ກັບ ວຽກງານ ການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ -ໂດຍສະເພາະແມ່ນການຄຸ້ມຄອງການນຳໃຊ້ ແລະຂະຫຍາຍ ລະບົບອິນເຕີແນັດ ຢ່າງຕັ້ງໜ້າ ແລະ ວ່ອງໄວຕື່ມອີກ.

ສະພາແຫ່ງຊາດ ກວດຄືນ ລະບອບກົດໝາຍ ອັນຈຳເປັນຕ່າງໆ ເພື່ອປັບປຸງ ບູລະນະ ແລະຊີ້ນຳການຄົ້ນຄວ້າ ວາງ ອັນໃໝ່ອອກ ເພື່ອກະຕຸກຊຸກຍູ້ ການນຳໃຊ້ ແລະຂະຫຍາຍເຕັກໂນໂລຢີການຂ່າວສານ ຢູ່ປະເທດເຮົາ ໃຫ້ ວ່ອງໄວ ແລະຂະຫຍັນຂັນແຂງ ຕື່ມອີກ.

ຄະນະພັກ, ອຳນາດການປົກຄອງ ຂັ້ນຕ່າງໆ ຕ້ອງເອົາໃຈໃສ່ ຢ່າງຈິດຈໍ່ ຕໍ່ ການຊີ້ນຳກຳກັບການຈັດຕັ້ງພັນຂະຫຍາຍ ເນື້ອໃນ ຂອງ ຄຳສັ່ງແນະນຳ ສະບັບນີ້ ເຂົ້າໃນຂອບເຂດ

ວຽກງານ ທີ່ຕົນຮັບຜິດຊອບ. ມີນາດຕະການ ອັນຕັ້ງໜ້າ ໃນການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີການຂ່າວສານ ເຂົ້າໃນຂົງເຂດວຽກງານ ຂອງຕົນ ຢ່າງເປັນເຈົ້າການ ແລະ ຖື ອັນນີ້ ເປັນວຽກງານ ສຳຄັນປົກກະຕິ ອັນໜຶ່ງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ -ສັງຄົມ ຂອງ ການຈັດຕັ້ງຕົນ.

ບັນດາອົງການຈັດຕັ້ງມະຫາຊົນຕ່າງໆ ຕ້ອງໄດ້ປະກອບສ່ວນ ປຸກລະດົມຊຸກຍູ້ ໃຫ້ ມະຫາຊົນ, ຊັ້ນຄົນຕ່າງໆ ຮ່ຳຮຽນຍົກລະດັບ ຄວາມຮູ້ ດ້ານເຕັກໂນໂລຢີການຂ່າວສານ ເພື່ອ ເປັນເຈົ້າການ ເຂົ້າຮ່ວມ ໃນການນຳໃຊ້ ແລະຂະຫຍາຍ ເຕັກໂນໂລຢີ ການຂ່າວສານ ຢູ່ ປະເທດເຮົາ ຢ່າງຕັ້ງໜ້າ. ເປັນຂະບວນ ອັນພົດພື້ນ ແລະກວ້າງຂວາງ.

ຕ. ກົມການເມືອງສູນກາງພັກ

ຜູ້ປະຈຳການ

ພັກປະຊາຊົນປະຕິວັດລາວ ★ ກົມການເມືອງສູນກາງ

[illegible] ບຸນພາວັນ